# ເອກະສານແນະນຳກ່ຽວກັບ
# ການປົກປ້ອງ ແລະ ຮັກສາ
# ຄວາມປອດໄພ ສຳລັບເດັກ

## ສິ່ງທີ່ຄວນປະຕິບັດ
## ແລະ ຂໍ້ຫ້າມ




ກະຊວງສຶກສາທິການ ແລະ ກິລາ

2024



**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ເລກທີ 3902 /ສສກ

ນະຄອນຫຼວງວຽງຈັນ,ວັນທີ 28 ມິຖຸນາ 2024

## ຂໍ້ຕົກລົງ

### ວ່າດ້ວຍການຮັບຮອງເອົາເອກະສານແນະນຳກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ

- ອີງຕາມ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບປັບປຸງ) ສະບັບເລກທີ 43/ສພຊ ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບເລກທີ 56/ສພຊ, ລົງວັນທີ 23 ທັນວາ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ສະບັບເລກທີ 110/ນຍ, ລົງວັນທີ 29 ມີນາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 3656/ສສກ, ລົງວັນທີ 04 ສິງຫາ 2022.

**ປະທານຄະນະກຳມາທິການເພື່ອຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ**
**ກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

ມາດຕາ 01 ເຫັນດີຮັບຮອງ "ເອກະສານແນະນຳກ່ຽວກັບ ການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ" ເພື່ອນຳໃຊ້ເຂົ້າໃນການຝຶກອົບຮົມ ແລະ ແຈກຢາຍໃຫ້ສະຖານການສຶກສາໃນຂອບເຂດທົ່ວປະເທດ.

ມາດຕາ 02 ມອບໃຫ້ຫ້ອງການ (ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ) ເປັນເຈົ້າການປະສານສົມທົບກັບບັນດາ ຂະແໜງການກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຈັດພິມ, ເຜີຍແຜ່ ແລະ ແຈກຢາຍດ້ວຍວິທີການທີ່ເໝາະສົມ.

ມາດຕາ 03 ໃຫ້ບັນດາຫ້ອງການ, ກົມ, ສະຖາບັນ, ຫ້ອງການທຽບເທົ່າ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ.

ມາດຕາ 04 ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮອງລັດຖະມົນຕີ**
**ປະທານຄະນະກຳມາທິການ**
**ເພື່ອຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ ສສກ**

ກະຊວງສຶກສາທິການ ແລະ ກິລາ
ລັດຖະມົນຕີ

ກິ່ງມະໂນ ພົມມະຫາໄຊ

ບ່ອນສົ່ງ:
- ຫ້ອງການກະຊວງ 01 ສະບັບ
- ພາກສ່ວນທີ່ກ່ຽວຂ້ອງ ພາກສ່ວນລະ 01 ສະບັບ
- ເກັບມ້ຽນ 02 ສະບັບ

# ຄຳນຳ

ວຽກງານປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ແມ່ນໜຶ່ງໃນໜ້າວຽກທີ່ສຳຄັນໃນແຜນດຳເນີນງານເພື່ອຄວາມສະເໝີພາບຍິງ-ຊາຍ ແລະ ວຽກງານແມ່ ແລະ ເດັກໃນຂະແໜງ ການສຶກສາທິການ ແລະ ກິລາ **5** ປີ ຄັ້ງທີ **IV** (2021-2025).

ເອກະສານແນະນຳກ່ຽວກັບການປົກປ້ອງເດັກນີ້ ໄດ້ຮຽບຮຽງ ແລະ ຂຽນຂຶ້ນ ເພື່ອນຳໃຊ້ໃນການເຜີຍແຜ່, ປູກຈິດສຳນຶກ, ສ້າງຂະບວນການ ແລະ ການຝຶກອົບຮົມການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ໃຫ້ແກ່ຜູ້ອຳນວຍການ, ຄູສອນ, ຄູນິເທດ ແລະ ວິຊາການໃນຂະແໜງ ການສຶກສາ ແລະ ກິລາ ແຕ່ຂັ້ນສູນກາງ ຈົນຮອດທ້ອງຖິ່ນ ເພື່ອຮັບຮູ້, ເຂົ້າໃຈຕໍ່ບັນດາເນື້ອໃນຂອງເອກະສານນີ້ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີຄຸນນະພາບ ແລະ ທົ່ວເຖິງ.

ເອກະສານແນະນຳກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກປະກອບມີເນື້ອໃນຄື: ພາກນຳສະເໜີ, ການກົດຂີ່ຂູດຮີດ, ການຄຸກຄາມ ແລະ ລ່ວງລະເມີດທາງເພດ, ການເຄົາລົບສິດທິເດັກ ດ້ານຄວາມປອດໄພ ແລະ ການຮຽນຮ່ວມ, ການຄຸ້ມຄອງຄວາມປະພຶດຂອງເດັກ, ການສື່ສານກັບເດັກ, ການຖ່າຍຮູບ ແລະ ຖ່າຍວິດີໂອທີ່ມີເດັກ, ການນຳໃຊ້, ການມີຢູ່ໃນຄອບຄອງ ຫຼື ການເອົາສິ່ງມຶນເມົາ, ຢາເສບຕິດ ແລະ ຢາປະເພດອື່ນໆໃຫ້ເດັກ.

ໃນການຮຽບຮຽງເອກະສານແນະນຳເຫຼັ້ມນີ້ ກໍຄົງຈະບໍ່ປາສະຈາກໄດ້ຂໍ້ຂາດຕົກບົກພ່ອງ ທາງດ້ານການນຳໃຊ້ຄຳສັບສຳນວນ, ເຄື່ອງໝາຍ ຫຼື ຮູບພາບ, ຖ້າຫາກພົບເຫັນຈຸດບົກພ່ອງ ຫຼື ຂໍ້ຜິດພາດໃດໆ ຂໍຄວາມຮ່ວມມືມາຍັງທ່ານ ນຳສົ່ງຄຳຄິດເຫັນນັ້ນ ເພື່ອເປັນການນຳໄປປັບປຸງແກ້ໄຂໃນຕໍ່ໜ້າ ໃຫ້ມີຄຸນນະພາບດີຂຶ້ນ.

ກະຊວງສຶກສາທິການ ແລະ ກິລາ

# ສາລະບານ


ພາກນຳສະເໜີ 5

ການກິດຂີ່ຂູດຮີດ, ການຄຸກຄາມ ແລະ ການລ່ວງລະເມີດທາງເພດ 6

ການເຄົາລົບສິດທິເດັກ ດ້ານຄວາມ ປອດໄພ ແລະ ການຮຽນຮ່ວມ 8

ການຄຸ້ມຄອງຄວາມປະພຶດຂອງເດັກ 11

ການສື່ສານກັບເດັກ 12

ການຖ່າຍຮູບ ແລະ ການຖ່າຍວີດີໂອ ທີ່ມີເດັກ 14

ການນຳໃຊ້, ການມີຢູ່ໃນຄອບຄອງ ຫຼື ການເອົາສິ່ງມຶນເມົາ,
ຢາເສບຕິດ ແລະ ຢາປະເພດອື່ນໆໃຫ້ເດັກ 17

ເອກະສານແນະນຳນີ້ ແມ່ນເວົ້າເຖິງພາລະບົດບາດຂອງບຸກຄົນ ຫຼື ການຈັດຕັ້ງເພື່ອຮັບປະກັນໃຫ້ເດັກທຸກຄົນສາມາດເຂົ້າເຖິງການສຶກສາທີ່ມີຄຸນະພາບຢູ່ໃນສະພາບແວດລ້ອມຂອງການຮຽນຮ່ວມທີ່ສະໜັບສະໜູນການເຕີບໃຫຍ່ຂອງເດັກໄດ້ຢ່າງປອດໄພ.




**ການປົກປ້ອງ ແລະ ການຮັກສາຄວາມປອດໄພ ສຳລັບເດັກ ແມ່ນຄວາມຮັບຜິດຊອບຂອງໝົດທຸກຄົນ.**

# ພາກນຳສະເໜີ

ກົດໝາຍຂອງ ສປປ ລາວ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກໄດ້ກຳນົດກ່ຽວກັບບັນດາຫຼັກການ, ລະບຽບ ແລະ ມາດຕະການຕ່າງໆທີ່ກ່ຽວຂ້ອງກັບການບໍລິຫານ, ການຕິດຕາມ ແລະ ການກວດກາການຈັດຕັ້ງປະຕິບັດການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກໃນຫຼາຍຊົນເຜົ່າ, ໃນນີ້ປະກອບມີມາດຕະການຕ່າງໆຕໍ່ຜູ້ກະທຳຜິດກັບເດັກ. ກົດໝາຍທີ່ມີຢູ່ເພື່ອຮັບປະກັນວ່າ ເດັກມີຄວາມສົມບູນທັງທາງດ້ານຮ່າງກາຍ, ຈິດໃຈ, ມີທັດສະນະຄະຕິທີ່ດີ, ມີຄວາມຮູ້, ຄວາມສາມາດ, ສາມາດມີຊີວິດທີ່ດີໃນສັງຄົມ ແລະ ກາຍເປັນຜູ້ສືບທອດທີ່ດີຂອງປະເທດຊາດ.

**ຄູ່ມືແນະນຳນີ້ ແມ່ນມີຄວາມກ່ຽວຂ້ອງກັບຄູ, ພະນັກງານຂັ້ນເມືອງ, ແຂວງ ແລະ ຂັ້ນກະຊວງ ແລະ ບັນດາຄູ່ຮ່ວມງານທຸກພາກສ່ວນທີ່ກ່ຽວຂ້ອງຍ້ອນວ່າ:**

- ພວກທ່ານ ມີການສື່ສານໂດຍກົງກັບເດັກ, ພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກໃນຄອບຄົວຂອງເດັກຢູ່ໃນໂຮງຮຽນຂອງພວກເຂົາ.
- ພວກທ່ານ ມີການສື່ສານໃນທາງກົງ ແລະ ທາງອ້ອມກັບເດັກ, ພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກໃນຄອບຄົວຂອງເດັກຢູ່ໃນໂຮງຮຽນທີ່ພວກທ່ານໃຫ້ການສະໜັບສະໜູນ.



**ອະທິບາຍຄຳສັບ**

**ເດັກ ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ.**

# ການກົດຂີ່ຂູດຮີດ, ການຄຸກຄາມ ແລະ ການລ່ວງລະເມີດທາງເພດ

**'ການລ່ວງລະເມີດທາງເພດ' ໃນຮູບແບບຕ່າງໆທີ່ເກີດຂຶ້ນໃນຕົວຈິງ ຫຼື ແບບອອນລາຍ, ລ້ວນແຕ່ເປັນສິ່ງທີ່ບໍ່ສາມາດຍອມຮັບໄດ້ຢ່າງເດັດຂາດເຊັ່ນ:**

- ລະຫວ່າງຜູ້ໃຫຍ່ ແລະ ເດັກ.
- ລະຫວ່າງເດັກດ້ວຍກັນ.
- ການລະເມີດທາງເພດທີ່ເກີດຂຶ້ນຕໍ່ໜ້າເດັກຄົນໃດໜຶ່ງ ຫຼື ເດັກຫຼາຍຄົນ.

**ພຶດຕິກຳລຸ່ມນີ້ ເປັນພຽງສ່ວນໜຶ່ງ ທີ່ສະແດງເຖິງການລ່ວງລະເມີດທາງເພດ:**

- ການຮ່ວມເພດ
- ການຈູບ
- ການລູບໄລ້
- ການຈັບ
- ການດູຖູກທາງເພດ
- ການສົ່ງຂໍ້ຄວາມທີ່ບໍ່ເໝາະສົມ
- ການຖ່າຍຮູບທີ່ບໍ່ເໝາະສົມ
- ການເປີດເຜີຍຮູບພາບລາມົກ ຫຼື ຮູບພາບໂປ້ເປືອຍ.

## ຂໍ້ຫ້າມ

- ຫ້າມມີພຶດຕິກຳທາງເພດກັບເດັກ.
- ຫ້າມສະແດງພຶດຕິກຳທາງເພດທຸກຮູບແບບຕໍ່ໜ້າເດັກເຊິ່ງຈະເຮັດໃຫ້ເຂົາຮູ້ສຶກບໍ່ພໍໃຈ, ອັບອາຍ ຫຼື ຖືກຂົ່ມຂູ່.
- ຫ້າມແກ້ເຄື່ອງ ຫຼື ເປີດເຜີຍຮູບຮ່າງເປົ່າເປືອຍຂອງທ່ານໃນທຸກຮູບແບບຕໍ່ໜ້າເດັກ.
- ຫ້າມໃຊ້ຄຳເວົ້າໃນທາງຊູ້ສາວ ຫຼື ໃຫ້ຄຳເຫັນໃນລັກສະນະຊັກຈູງໃນທາງເພດກັບເດັກ.
- ຫ້າມສົນທະນາກ່ຽວກັບເລື່ອງເພດໃນຮູບແບບທີ່ບໍ່ເໝາະສົມກັບເດັກ (ຕົວຢ່າງ: ຖາມເດັກກ່ຽວກັບເລື່ອງເພດ ຫຼື ປະສົບການ ກ່ຽວກັບການປະພຶດທາງເພດ).
- ເວົ້າຕະຫຼົກກ່ຽວກັບເລື່ອງເພດ.



# ຢ່າເມີນເສີຍ!

ການເມີນເສີຍຕໍ່ວຽກງານການປົກປ້ອງ ແລະ ຮັກສາຄວາມປອດໄພສໍາລັບເດັກຈະເປັນການສະແດງໃຫ້ເຫັນວ່າ: ທ່ານເຫັນດີ ແລະ ສົ່ງເສີມພຶດຕິກໍາການກົດຂີ່ຂົ່ມເຫັງ, ການຄຸກຄາມ ແລະ ການລ່ວງລະເມີດທາງເພດກັບເດັກ ບໍ່ວ່າຈະຢູ່ໃນໂຮງຮຽນ ຫຼື ຢູ່ໃນຊຸມຊົນຂອງທ່ານ.

*ຖ້າທ່ານພົບເຫັນການປະພຶດທາງເພດຕ່າງໆຕໍ່ກັບເດັກຄົນໃດໜຶ່ງ, ກະລຸນາແຈ້ງໄປທີ່ສາຍດ່ວນເລື່ອງການປົກປ້ອງເດັກ ຢູ່ໃນແຂວງຂອງທ່ານ.*

# ການເຄົາລົບສິດທິເດັກ ດ້ານຄວາມປອດໄພ ແລະ ການຮຽນຮ່ວມ

ພາລະບົດບາດຫຼັກຂອງທ່ານແມ່ນການໃຫ້ການສະໜັບສະໜູນຄູສອນເພື່ອໃຫ້ພວກເຂົາສາມາດໃຫ້ການຊ່ວຍເຫຼືອນັກຮຽນ ໃຫ້ສາມາດບັນລຸໄດ້ຜົນການຮຽນທີ່ຄາດຫວັງໄວ້ຕາມເກນອາຍຸ, ຂັ້ນຮຽນ ແລະ ຄວາມສາມາດຂອງພວກເຂົາ.

ພາລະບົດບາດນີ້ລວມທັງການຊ່ວຍໃຫ້ຄູສາມາດກຳນົດ ແລະ ຕອບສະໜອງຕາມຄວາມຕ້ອງການດ້ານການຮຽນຂອງນັກຮຽນແຕ່ລະຄົນພ້ອມກັບການເຄົາລົບສິດ ແລະ ກຽດສັກສີຂອງເດັກທຸກຄົນ.

ນອກຈາກນັ້ນ ຍັງມີການປະຕິສຳພັນກັບນັກຮຽນ ເພື່ອສະແດງໃຫ້ເຫັນວິທີການສອນທີ່ແທດເໝາະກັບທຸກຄົນຈະຊ່ວຍໃຫ້ເດັກມີການຮຽນຮູ້ ແລະ ພັດທະນາພ້ອມກັບເຄົາລົບບັນດາຄວາມສາມາດ ແລະ ທ່າແຮງທີ່ແຕກຕ່າງຂອງພວກເຂົາ.

## ສິ່ງທີ່ຄວນປະຕິບັດ

- ປະຕິບັດກັບເດັກທຸກຄົນຢ່າງເທົ່າທຽມກັນ ໂດຍບໍ່ຈຳແນກເພດ, ຊົນເຜົ່າ, ລະດັບ ການຮຽນຮູ້ ຫຼື ຄວາມສາມາດຂອງເດັກ.
- ຊຸກຍູ້, ສົ່ງເສີມ ແລະ ໃຫ້ຄຳແນະນຳກ່ຽວກັບວິທີການແກ້ໄຂບັນຫາ ຫຼື ສິ່ງທ້າທາຍຕ່າງໆ ທີ່ສົ່ງຜົນກະທົບຕໍ່ການເຂົ້າເຖິງການສຶກສາທີ່ມີຄຸນນະພາບຢ່າງເທົ່າທຽມຂອງເດັກ.
- ແນະນຳຕົນເອງໃຫ້ເດັກຮັບຮູ້ວ່າທ່ານເປັນບຸກຄົນພາຍນອກທີ່ຈະມາໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນໂຮງຮຽນ.
- ທ່ານຕ້ອງເປັນແບບຢ່າງໃນການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກຢ່າງເຂັ້ມງວດຢູ່ໃນໂຮງຮຽນ ແລະ ຊຸມຊົນຂອງທ່ານ. ເຄົາລົບຕໍ່ກັບຄວາມສົນໃຈ, ຄວາມຕ້ອງການ, ແລະ ຮັບຟັງຄຳຄິດເຫັນຕ່າງໆຂອງເດັກ ໃນຂະນະທີ່ທ່ານສື່ສານກັບເດັກ ຫຼື ກໍລະນີເດັກສະເໜີຄຳຄິດເຫັນໃດໜຶ່ງຕໍ່ທ່ານ.
- ຮັບປະກັນວ່າ ພໍ່ແມ່, ຜູ້ປົກຄອງ ຫຼື ສະມາຊິກໃນຄອບຄົວຂອງເດັກຮັບຮູ້ ແລະ ເຂົ້າໃຈ ຕໍ່ຈຸດປະສົງຂອງທ່ານໃນການມາຢ້ຽມຢາມໂຮງຮຽນເພື່ອໃຫ້ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກເຫັນດີ ແລະ ອະນຸຍາດໃຫ້ທ່ານສາມາດເຮັດວຽກຮ່ວມກັບເດັກໄດ້, ນີ້ແມ່ນສ່ວນໜຶ່ງຂອງການໄປຢ້ຽມຢາມຊ່ວຍເຫຼືອຂອງທ່ານ.

# ຂໍ້ຫ້າມ

- ຫ້າມໃຫ້ການຊ່ວຍເຫຼືອໃນຮູບແບບໃດໜຶ່ງແກ່ເດັກ ຫຼື ສະມາຊິກໃນຄອບຄົວຂອງພວກເຂົາ ທີ່ບໍ່ກ່ຽວຂ້ອງກັບຂອບເຂດພາລະບົດບາດຂອງທ່ານຖ້າທ່ານບໍ່ໄດ້ມີສາຍພົວພັນທາງດ້ານສັງຄົມ, ທາງສ່ວນຕົວ ຫຼື ທາງຄອບຄົວກັບພວກເຂົາມາກ່ອນ ເຊັ່ນ: ການຊ່ວຍເຫຼືອດ້ານການເງິນ, ການເບິ່ງແຍງ ຫຼື ດູແລເດັກ, ການຊ່ວຍເຫຼືອ ດ້ານພາຫະນະໃນການເດີນທາງ ຫຼື ດ້ານທີ່ພັກຕ່າງໆ.
- ຫ້າມໃຫ້ການຊ່ວຍເຫຼືອດ້ານພາຫະນະໃນການເດີນທາງແກ່ເດັກ ຫຼື ເດີນທາງຮ່ວມກັບເດັກ, ນອກຈາກວ່າທ່ານໄດ້ຮັບອະນຸຍາດຈາກພໍ່ແມ່, ຜູ້ປົກຄອງ ຫຼື ສະມາຊິກໃນຄອບຄົວທີ່ມີສິດເບິ່ງແຍງຕາມກົດໝາຍ.
- ຫ້າມສ້າງສາຍພົວພັນກັບເດັກທີ່ອາດຈະຖືວ່າເປັນການເບິ່ງແຍງເປັນພິເສດເກີນກວ່າຄົນອື່ນ.
- ຫ້າມໃຫ້ຂອງຂວັນສ່ວນຕົວ ຫຼື ປະຕິບັດແບບພິເສດຕໍ່ກັບເດັກທີ່ນອກເໜືອຈາກຂອງລາງວັນທີ່ໃຫ້ແບບທາງການ.
- ຫ້າມເປີດເຜີຍ ຫຼື ແບ່ງປັນຂໍ້ມູນສ່ວນຕົວຂອງທ່ານຕໍ່ເດັກ ເຊັ່ນ: ຂໍ້ມູນດ້ານການເງິນ ແລະ ອື່ນໆ
- ຫ້າມບອກໃຫ້ເດັກຮັກສາຄວາມລັບ ເຊັ່ນ: ບໍ່ໃຫ້ບອກພໍ່ແມ່ຜູ້ປົກຄອງ ຫຼື ຄູສອນກ່ຽວກັບຂໍ້ມູນຕ່າງໆທີ່ທ່ານໄດ້ສົນທະນາກັບພວກເຂົາ.
- ຫ້າມປະຕິບັດກັບເດັກຄືກັບຜູ້ໃຫຍ່, ເຖິງວ່າພວກເຂົາຈະເບິ່ງຄືເປັນຜູ້ໃຫຍ່ ແລະ ໄດ້ຮັບການມອບໝາຍຄວາມຮັບຜິດຊອບຢູ່ພາຍໃນຄອບຄົວຂອງພວກເຂົາກໍຕາມ.
- ຫ້າມສວຍໃຊ້ໂອກາດເຮັດໃຫ້ຕົນເອງເປັນທີ່ເພິ່ງທາງອາລົມໃນເວລາເດັກມີບັນຫາເພື່ອຫາຜົນປະໂຫຍດແກ່ຕົນເອງເຊັ່ນ: ໃຫ້ການຊ່ວຍເຫຼືອດ້ານອາລົມແທນໝູ່, ຄູ ແລະ ສະມາຊິກໃນຄອບຄົວຂອງເດັກ.

**ການກະທຳເຫຼົ່ານີ້ ສ່ວນຫຼາຍແມ່ນເຮັດໄປດ້ວຍຄວາມປາດຖະໜາດີ; ແຕ່ຖ້າເວົ້າເລື່ອງການຮັກສາຄວາມປອດໄພແລ້ວ, ຜູ້ທີ່ຍັງບໍ່ສາມາດຮັບປະກັນໄດ້ວ່າຈະເປັນຜູ້ສະໜອງການສະໜັບສະໜູນໄລຍະຍາວໃນຊີວິດຂອງເດັກຜູ້ໜຶ່ງໄດ້.**
**ຖ້າທ່ານເຫັນໄດ້ເຖິງຄວາມຕ້ອງການການສະໜັບສະໜູນຂອງເດັກຄົນ ໃດໜຶ່ງນັ້ນ, ທາງທີ່ດີທີ່ສຸດທີ່ທ່ານເຮັດໄດ້ ແມ່ນການຊອກຫາວິທີແກ້ໄຂທີ່ຍືນຍົງໃນໄລຍະຍາວ.**
**ຖ້າເຫັນວ່າ: ການສະໜັບສະໜູນໄລຍະສັ້ນແບບທັນທີ ແມ່ນມີຄວາມຈຳເປັນ, ຕ້ອງຮັບປະກັນໃຫ້ມີແຜນການໄລຍະຍາວ ໂດຍທີ່ບໍ່ຈຳເປັນຕ້ອງມີການສະໜັບສະໜູນຈາກທ່ານ.**


ໂຮງຮຽນປະຖົມ

# ການຄຸ້ມຄອງຄວາມປະພຶດຂອງເດັກ

ພະນັກງານຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍສົມທົບກັບຄູຄວນປະຕິບັດຕົນເປັນແບບຢ່າງໃນໂຮງຮຽນທີ່ຕົນເອງສອນ ແລະ ໃຫ້ການຊ່ວຍເຫຼືອເພື່ອເປັນການສົ່ງເສີມ ແລະ ຊຸກຍູ້ໃຫ້ນັກຮຽນມີພຶດຕິກຳທີ່ດີ.

ເມື່ອນັກຮຽນມີພຶດຕິກຳທີ່ບໍ່ດີ, ແມ່ນ**ຫ້າມເດັດຂາດ**ບໍ່ໃຫ້ໃສ່ລະບຽບນັກຮຽນດ້ວຍການລົງໂທດທາງດ້ານຮ່າງກາຍ ເຊັ່ນ: ການຕີດ້ວຍໄມ້ແສ້ ຫຼື ຕົບຕີເດັກ. ນອກຈາກນີ້ ຕ້ອງຮັບປະກັນໃຫ້ໂຮງຮຽນເປັນບ່ອນທີ່ມີຄວາມປອດໄພ ແລະ ສົ່ງເສີມການຮຽນຮ່ວມ.

## ສິ່ງທີ່ຄວນປະຕິບັດ

- ແລກປ່ຽນກັບຄູກ່ຽວກັບວິທີການໃຫ້ລາງວັນ ແລະ ຊຸກຍູ້ໃຫ້ເກີດມີພຶດຕິກຳທີ່ດີເພື່ອໃຫ້ຫຼຸດພຶດຕິກຳທີ່ບໍ່ດີ.
- ກຳນົດຄຳແນະນຳທີ່ຊັດເຈນ ສຳລັບພຶດຕິກຳທີ່ຄາດຫວັງໄວ້ກັບເດັກ.
- ໃຫ້ຄຳແນະນຳທີ່ບໍ່ໃຊ້ຄວາມຮຸນແຮງໂດຍເນັ້ນໃສ່ການແກ້ໄຂບັນຫາ, ໃຫ້ຄວາມເຄົາລົບ ແລະ ສອດຄ່ອງກັບບັນດາຫຼັກການທີ່ກ່ຽວກັບພັດທະນາການຂອງເດັກ.
- ແກ້ໄຂພຶດຕິກຳທີ່ບໍ່ດີດ້ວຍວິທີການທີ່ສຸຂຸມ ແລະ ໜັກແໜ້ນ.
- ແນະນຳໃຫ້ເດັກປະຕິບັດຕາມກົດລະບຽບຕ່າງໆທີ່ໄດ້ກຳນົດຂຶ້ນ.
- ສ້າງໃຫ້ມີ **'ເຂດປອດໄພ'** ສຳລັບເດັກ ເພື່ອໃຫ້ເດັກສາມາດສະແດງຄວາມຮູ້ສຶກອອກມາໃນເວລາທີ່ພວກເຂົາຮູ້ສຶກບໍ່ປອດໄພ.
- ຊຸກຍູ້ໃຫ້ເດັກສົນທະນາກ່ຽວກັບຄວາມຮູ້ສຶກ ແລະ ເຫດຜົນຕ່າງໆທີ່ເຮັດໃຫ້ເດັກເກີດຄວາມຮູ້ສຶກເຫຼົ່ານັ້ນ.

## ຂໍ້ຫ້າມ

- ຫ້າມໃສ່ລະບຽບ ຫຼື ລົງໂທດໃນຮູບແບບໃດໜຶ່ງທີ່ເຮັດໃຫ້ເດັກຮູ້ສຶກເຈັບ ຫຼື ບໍ່ສະບາຍທາງດ້ານຮ່າງກາຍ ແລະ ຈິດໃຈ.
- ຫ້າມແຍກເດັກຄົນໃດໜຶ່ງອອກຈາກນັກຮຽນຄົນອື່ນໆໃນຫ້ອງເພື່ອເປັນການລົງໂທດ.
- ຫ້າມລົງໂທດໃນຮູບແບບໃດໜຶ່ງທີ່ເຮັດໃຫ້ເກີດຄວາມອັບອາຍ, ຮຸນແຮງ ຫຼື ເຮັດໃຫ້ເກີດຄວາມຢ້ານ.

# ການສື່ສານກັບເດັກ

ພະນັກງານຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ໂດຍສະເພາະແມ່ນຄູທີ່ໄດ້ຮັບການມອບໝາຍໄປປະຕິບັດໜ້າທີ່ໃຫ້ການຊ່ວຍເຫຼືອຕ້ອງໄດ້ມີການພົວພັນກັບເດັກ. ສະນັ້ນ, ຄຳສັບ ແລະ ນ້ຳສຽງທີ່ທ່ານໃຊ້ແມ່ນມີຄວາມສຳຄັນຫຼາຍ.

ພະນັກງານຂັ້ນສູນກາງ ແລະ ທ້ອງຖິ່ນ, ໂດຍສະເພາະແມ່ນຄູຕ້ອງເປັນແບບຢ່າງທີ່ດີໃນການສື່ສານກັບເດັກໃນລັກສະນະທີ່ໃຫ້ຄຳແນະນຳທີ່ຈະແຈ້ງ ເພື່ອເສີມສ້າງຄວາມໝັ້ນໃຈຂອງພວກເຂົາ, ຊຸກຍູ້ສິ່ງເສີມ ແລະ ສະໜັບສະໜູນພັດທະນາການຂອງເດັກ ແລະ ສິ່ງສຳຄັນທີ່ສຸດແມ່ນ: **ບໍ່ກໍ່ໃຫ້ເກີດຄວາມເສຍຫາຍ ບໍ່ວ່າທາງກາຍ ຫຼື ທາງອ້ອມ**



## ສິ່ງທີ່ຄວນປະຕິບັດ

- ໃຊ້ພາສາທີ່ຈະແຈ້ງ, ກົງໄປກົງມາ ແລະ ເໝາະສົມກັບເກນອາຍຸຂອງເດັກ.
- ໃຊ້ຄຳສັບ, ນ້ຳສຽງ, ການສະແດງອອກທາງສີໜ້າ ແລະ ທ່າທາງຂອງຮ່າງກາຍ ເພື່ອສື່ສານອອກໄປດ້ວຍຄວາມສຸຂຸມ ແລະ ໃຫ້ກຽດເດັກ.
- ສົ່ງເສີມພຶດຕິກຳໃນທາງທີ່ດີຂອງເດັກເພື່ອເສີມສ້າງຄວາມໝັ້ນໃຈໃຫ້ແກ່ເຂົາເຈົ້າລວມທັງທັກສະຄວາມສາມາດຕ່າງໆ.
- ຊຸກຍູ້ ແລະ ສະໜັບສະໜູນເພື່ອສ້າງສະພາບແວດລ້ອມຂອງການຮຽນຮ່ວມໃຫ້ມີຄວາມມ່ວນຊື່ນ.
- ແນະນຳຄູ, ພໍ່ແມ່, ຜູ້ປົກຄອງຂອງເດັກ ຫຼື ຄົນອື່ນໆ ທີ່ໃຊ້ພາສາບໍ່ຖືກຕ້ອງ ແລະ ສຳນຽງທີ່ບໍ່ເໝາະສົມຄວນຊີ້ແຈງໃຫ້ຮູ້ວ່າ ນັ້ນແມ່ນສິ່ງທີ່ບໍ່ເໝາະສົມ.
- ລາຍງານເລື່ອງເຫດການໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຖ້າທ່ານສັງເກດເຫັນວ່າ ມີຮູບແບບການສື່ສານທີ່ເກີດຂຶ້ນເປັນປົກກະຕິໃນທາງທີ່ບໍ່ໃຫ້ກຽດ, ບໍ່ເໝາະສົມ ຫຼື ເປັນອັນຕະລາຍລະຫວ່າງຜູ້ໃຫຍ່ ແລະ ເດັກຢູ່ໃນໂຮງຮຽນທີ່ທ່ານກຳລັງໃຫ້ການສະໜັບສະໜູນຢູ່.
- ລາຍງານເລື່ອງເຫດການໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຖ້າທ່ານສັງເກດເຫັນວ່າມີຮູບແບບການສື່ສານທີ່ເກີດຂຶ້ນເປັນປົກກະຕິລະຫວ່າງເດັກກັບເດັກໃນທາງທີ່ບໍ່ໃຫ້ກຽດກັນ ຫຼື ບໍ່ເໝາະສົມໃນໂຮງຮຽນທີ່ທ່ານກຳລັງໃຫ້ການສະໜັບສະໜູນຢູ່ເຊິ່ງຜູ້ໃຫຍ່ທ່ານອື່ນໆບໍ່ໄດ້ພະຍາຍາມແກ້ໄຂບັນຫາເຫຼົ່ານີ້.

## ຂໍ້ຫ້າມ

- ຫ້າມໃຊ້ຄວາມຄິດແບບຄອງເດີມທີ່ບໍ່ເໝາະສົມ, ຊັກຈູງ ຫຼື ສຽດສີ ເມື່ອສື່ສານກັບເດັກ.
- ຫ້າມເຮັດໃຫ້ເດັກເກີດຄວາມອັບອາຍ, ມີການໃຊ້ຄຳເວົ້າທີ່ເຮັດໃຫ້ເສື່ອມເສຍ ຫຼື ເປັນການດູຖູກ (ຕົວຢ່າງ: ເອີ້ນເດັກດ້ວຍຊື່ຂອງຊົນເຜົ່າ, ລະດັບການຮຽນຮູ້ ຫຼື ຄວາມພິການ).
- ຫ້າມໃຊ້ທ່າທາງ ແລະ ພາສາທີ່ອະນາຈານ.
- ຫ້າມເຮັດໃຫ້ເດັກອັບອາຍ, ມີການຂົ່ມຂູ່ ຫຼື ມີການຕຳນິເດັກເປັນປະຈຳ.
- ຫ້າມອະນຸຍາດໃຫ້ເດັກໃຊ້ພາສາທີ່ບໍ່ເໝາະສົມໂດຍບໍ່ມີການຕັກເຕືອນບໍ່ວ່າຈະຕໍ່ກັບຜູ້ໃຫຍ່ ຫຼື ກັບເດັກຄົນອື່ນໆ.
- ຫ້າມແຍກເດັກຄົນໜຶ່ງອອກຈາກໝູ່ ຫຼື ດູຖູກພວກເຂົາຕໍ່ໜ້າໝູ່ ຫຼື ສະມາຊິກຄົນອື່ນໆ.
- ຫ້າມອະນຸຍາດໃຫ້ຄູສອນຄົນໃດໜຶ່ງໃນໂຮງຮຽນທີ່ທ່ານກຳລັງໃຫ້ການສະໜັບສະໜູນເຮັດສິ່ງຕ່າງໆທີ່ກ່າວມາຂ້າງເທິງໂດຍບໍ່ມີການຕັກເຕືອນ.

# ການຖ່າຍຮູບ ຫຼື ຖ່າຍວິດີໂອ ເດັກ

**ຫ້າມເດັດຂາດບໍ່ໃຫ້ ຖ່າຍຮູບ ຫຼື ຖ່າຍວິດີໂອ ເດັກ ຖ້າບໍ່ໄດ້ຮັບອະນຸຍາດຈາກພໍ່ແມ່, ຜູ້ປົກຄອງ ຫຼື ສະມາຊິກຄອບຄົວຂອງເດັກ ແລະ ເດັກເອງກໍຕ້ອງ ມີຄວາມເຕັມໃຈ ທີ່ຈະເຂົ້າຮ່ວມ**

## ສິ່ງທີ່ຄວນປະຕິບັດ

- ການຖ່າຍຮູບ ຫຼື ຖ່າຍວິດີໂອເດັກຕ້ອງຂໍອະນຸຍາດຈາກພໍ່ແມ່ຜູ້ປົກຄອງຂອງເດັກແຕ່ລະຄົນທີ່ຈະຢູ່ໃນຮູບພາບ ຫຼື ວິດີໂອ ຄວນອະທິບາຍໃຫ້ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກຮັບຮູ້ວ່າພວກເຂົາມີສິດທີ່ຈະປະຕິເສດຄຳຂໍດັ່ງກ່າວນີ້ໄດ້.
- ສື່ສິ່ງພິມ ຫຼື ນຳໃຊ້ເຂົ້າໃນສື່ການສອນ ຫຼື ສື່ໂຄສະນາຕ່າງໆອະທິບາຍໃຫ້ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກຮັບຮູ້ກ່ຽວກັບຈຸດປະສົງຂອງການຖ່າຍຮູບ ຫຼື ຖ່າຍວິດີໂອ ແລະ ແຈ້ງໃຫ້ຮູ້ວ່າທ່ານຈະໃຊ້ຮູບພາບ ຫຼື ວິດີໂອ ດັ່ງກ່າວແບບໃດ ຕົວຢ່າງ: ຈະຖືກນຳໃຊ້ໃນສື່ອອນລາຍ.
- ອະທິບາຍໃຫ້ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກຮັບຮູ້ວ່າ ເມື່ອຮູບຖ່າຍຖືກເຜີຍແຜ່ອອກໄປແລ້ວທ່ານຈະບໍ່ສາມາດລຶບອອກໄດ້.
- ຕ້ອງຢຸດຖ່າຍຮູບ ຫຼື ຖ່າຍວິດີໂອເດັກໃນທັນທີຖ້າເຫັນວ່າເຂົາເຈົ້າບໍ່ພໍໃຈ, ຫຼື ອາຍ. ຫຼື ບໍ່ເຕັມໃຈ.
- ໃນຮູບພາບ ຫຼື ວິດີໂອ ທີ່ທ່ານຖ່າຍຕ້ອງຮັບປະກັນວ່າບໍ່ມີຂໍ້ມູນທີ່ສາມາດລະບຸຕົວຕົນຂອງເດັກ ແລະ ສະຖານທີ່ທີ່ເດັກອາໄສຢູ່. ຕົວຢ່າງ: ຕ້ອງຮັບປະກັນບໍ່ໃຫ້ເດັກໃສ່ປ້າຍຊື່ຂອງພວກເຂົາ ແລະ ຫຼີກເວັ້ນບໍ່ໃຫ້ມີປ້າຍຕ່າງໆທີ່ອາດຈະເຮັດໃຫ້ຮູ້ໄດ້ວ່າໂຮງຮຽນດັ່ງກ່າວຕັ້ງຢູ່ບ່ອນໃດ.
- ຫຼີກເວັ້ນຮູບພາບທີ່ຈະເຮັດໃຫ້ເຫັນໃບໜ້າຂອງເດັກຢ່າງຊັດເຈນ. ຕົວຢ່າງ: ໃຊ້ມຸມທີ່ບໍ່ສະແດງໃຫ້ເຫັນໃບໜ້າຂອງເດັກໂດຍກົງ ຫຼື ຖ່າຍຮູບເດັກເປັນກຸ່ມດ້ວຍໄລຍະໄກແທນທີ່ຈະເປັນການຖ່າຍຮູບພາບຂອງເດັກຄົນໃດໜຶ່ງເປັນລາຍບຸກຄົນ.
- ຕ້ອງຮັບປະກັນວ່າທຸກຮູບພາບຂອງເດັກນຳສະເໜີພາບຂອງເດັກໃນແບບທີ່ດີ, ມີກຽດສັກສີ ແລະ ຖືກເຄົາລົບ. ໃຫ້ເນັ້ນໜັກໃສ່ຄວາມສາມາດ ແລະ ຜົນສຳເລັດຂອງພວກເຂົາ.



# ຂໍ້ຫ້າມ

- ຫ້າມຮັບເອົາໃບອະນຸຍາດການຖ່າຍຮູບ ຫຼື ວິດີໂອເດັກທີ່ເຊັນໂດຍຜູ້ອຳນວຍການໂຮງຮຽນ ຫຼື ຄູ ຕ້ອງໄດ້ຮັບອະນຸຍາດເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງທີ່ມີສິດທາງກົດໝາຍເທົ່ານັ້ນ.
- ຫ້າມຖ່າຍຮູບ ຫຼື ວິດີໂອທີ່ສະແດງໃຫ້ເຫັນເຖິງສາຍພົວພັນທີ່ບໍ່ເໝາະສົມລະຫວ່າງຜູ້ໃຫຍ່ ແລະ ເດັກ.
- ຫ້າມຖ່າຍຮູບ ຫຼື ວິດີໂອທີ່ນຳສະເໜີພາບຂອງເດັກໃນແບບເປັນການອະນາຈານ; ຕົວຢ່າງ: ການນຸ່ງຖື ຫຼື ເຮັດທ່າທາງທີ່ບໍ່ເໝາະສົມ.
- ຫ້າມຖ່າຍຮູບ ຫຼື ວິດີໂອທີ່ນຳສະເໜີເດັກໃນສະຖານະການທີ່ບໍ່ປອດໄພ.
- ຫ້າມຖ່າຍຮູບ ຫຼື ວິດີໂອທີ່ອາດສື່ຄວາມໝາຍວ່າມີຄວາມຮຸນແຮງ, ການຄຸກຄາມຕໍ່ກັບເດັກ ຫຼື ລະຫວ່າງເດັກດ້ວຍກັນ.
- ຫ້າມຖ່າຍຮູບ ຫຼື ວິດີໂອຂອງເດັກ ເພື່ອເອົາໄປນຳໃຊ້ເປັນການສ່ວນຕົວ.
- ຫ້າມສະແດງຮູບພາບ ຫຼື ວິດີໂອຂອງເດັກທາງອອນລາຍ ຫຼື ສົ່ງໃຫ້ຄົນອື່ນ, ຍົກເວັ້ນວ່າທ່ານໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກ.
- ຫ້າມໃຫ້ເງິນ ຫຼື ຊົດເຊີຍໃນຮູບແບບໃດໜຶ່ງ ໃຫ້ແກ່ເດັກ ຫຼື ພໍ່ແມ່, ຜູ້ປົກຄອງຂອງເຂົາເຈົ້າ ເພື່ອແລກປ່ຽນກັບການຖ່າຍຮູບ ຫຼື ຖ່າຍວິດີໂອເດັກ.

# ການສື່ສານແບບອີເລັກໂຕຣນິກ ຫຼື ແບບອອນລາຍ

ພະນັກງານຂັ້ນສູນກາງ ຫຼື ທ້ອງຖິ່ນ, ອາດຈະບໍ່ຈຳເປັນຕ້ອງຕິດຕໍ່ກັບເດັກໂດຍກົງຜ່ານການສື່ສານແບບອີເລັກໂຕຣນິກ ຫຼື ແບບອອນລາຍ. ເຖິງຢ່າງໃດກໍຕາມ, ຖ້າມີຄວາມຈຳເປັນທີ່ຕ້ອງໄດ້ສອບຖາມ ຫຼື ຕິດຕໍ່ຫາເດັກໃນຮູບແບບດັ່ງກ່າວ, ຄວນສື່ສານຜ່ານທາງພໍ່ແມ່, ຜູ້ປົກຄອງ, ສະມາຊິກຄອບຄົວ ແລະ ຄູຂອງພວກເຂົາ.

## ຂໍ້ຫ້າມ

- ຫ້າມເປັນໝູ່ກັບເດັກຕາມສື່ສັງຄົມອອນລາຍຕ່າງໆ.
- ຫ້າມສື່ສານແບບສ່ວນຕົວກັບເດັກຜ່ານທາງໂທລະສັບ, ອີເມວ ຫຼື ສື່ສັງຄົມອອນລາຍ.
- ຫ້າມບອກໃຫ້ເດັກ ປົກປິດເລື່ອງການສື່ສານແບບອອນລາຍໄວ້ເປັນຄວາມລັບ ແລະ ບໍ່ໃຫ້ບອກພໍ່ແມ່, ຜູ້ປົກຄອງ, ສະມາຊິກໃນຄອບຄົວ ຫຼື ຄົນອື່ນໆ.
- ຫ້າມໃຊ້ການສື່ສານແບບອີເລັກໂຕຣນິກກັບເດັກ ເພື່ອຈັດກິດຈະກຳທາງສັງຄົມທີ່ບໍ່ໄດ້ຮັບອະນຸຍາດ ຫຼື ເພື່ອການຕິດຕໍ່ອື່ນໆ.



# ການນຳໃຊ້, ການມີຢູ່ໃນຄອບຄອງ ຫຼື ການເອົາສິ່ງມຶນເມົາ, ຢາເສບຕິດ ແລະ ຢາປະເພດອື່ນໆໃຫ້ເດັກ

ຂໍ້ບັງຄັບນີ້ ແມ່ນໄດ້ຮັບການລະບຸໄວ້ຢ່າງຊັດເຈນຢູ່ໃນ **ມາດຕາ 7.6 ຂອງຈັນຍາບັນຄູ - ການຮັກສາຄຸນສົມບັດ/ຈັນຍາບັນຂອງຄູສອນ. ບໍ່ຄຸ້ມຄອງ ແລະ ນຳໃຊ້ສິ່ງເສບຕິດ, ບໍ່ດື່ມສິ່ງມຶນເມົາໃນເວລາປະຕິບັດໜ້າທີ່ ແລະ ໃນທີ່ສາທາລະນະ.**

## ຂໍ້ຫ້າມ

- ໃນເວລາເຮັດວຽກ ຫຼື ຢູ່ໃນເຂດສາທາລະນະ ຫ້າມນຳໃຊ້, ຄອບຄອງ, ເສບ, ດື່ມສິ່ງມຶນເມົາ ຫຼື ເສບຢາຜິດກົດໝາຍໃດໜຶ່ງ.
- ຫ້າມເອົາສິ່ງມຶນເມົາ ຫຼື ຢາເສບຕິດໃຫ້ເດັກ (ລວມທັງຢາສູບ).
- ຫ້າມຈັດຫາເອົາຢາປົວພະຍາດໃຫ້ເດັກໃນໂຮງຮຽນເວັ້ນເສຍແຕ່ຈະໄດ້ຮັບອະນຸຍາດຈາກພໍ່ແມ່, ຜູ້ປົກຄອງ ຫຼື ສະມາຊິກໃນຄອບຄົວຂອງເຂົາເຈົ້າ.



## ຖ້າທ່ານພົບເຫັນການປະພຶດທາງເພດຕໍ່ກັບເດັກ ຫຼື ພົບເຫັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ກະລຸນາແຈ້ງໄປທີ່ສາຍດ່ວນສຳລັບການປົກປ້ອງເດັກຢູ່ໃນແຂວງຂອງທ່ານຕາມເບີດັ່ງລຸ່ມນີ້:

- **ສາຍດ່ວນກະຊວງສຶກສາທິການ ແລະ ກິລາ** — **ໂທ 1520**
- **ສາຍດ່ວນເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ** — **ໂທ 1300**
- **ສາຍດ່ວນສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກ** — **ໂທ 1362 ແລະ 021 771302-03**

### ເບີໂທລະສັບຕິດຕໍ່ ສຳລັບສະຫະພັນແມ່ຍິງແຂວງ ແລະ ນະຄອນຫຼວງວຽງຈັນ

| | | | |
|---|---|---|---|
| 1. | ສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ | 021 265264 | ສາຍດ່ວນ 137, 1361 |
| 2. | ສະຫະພັນແມ່ຍິງ ແຂວງ ວຽງຈັນ | 023 400209 | |
| 3. | ສະຫະພັນແມ່ຍິງ ແຂວງ ຊຽງຂວາງ | 061 312154 | |
| 4. | ສະຫະພັນແມ່ຍິງ ແຂວງ ໄຊສົມບູນ | 026 210015 | |
| 5. | ສະຫະພັນແມ່ຍິງ ແຂວງ ຫຼວງພະບາງ | 071 212171 | |
| 6. | ສະຫະພັນແມ່ຍິງ ແຂວງ ອຸດົມໄຊ | 081 312026 | |
| 7. | ສະຫະພັນແມ່ຍິງ ແຂວງ ບໍ່ແກ້ວ | 084 211015 | |
| 8. | ສະຫະພັນແມ່ຍິງ ແຂວງ ຫຼວງນ້ຳທາ | 086 312062 | |
| 9. | ສະຫະພັນແມ່ຍິງ ແຂວງ ໄຊຍະບູລີ | 074 211225 | |
| 10. | ສະຫະພັນແມ່ຍິງ ແຂວງ ຜົ້ງສາລີ | 088 870370 | |
| 11. | ສະຫະພັນແມ່ຍິງ ແຂວງ ຫົວພັນ | 064 312080 | |
| 12. | ສະຫະພັນແມ່ຍິງ ແຂວງ ບໍລິຄຳໄຊ | 054 280136 | |
| 13. | ສະຫະພັນແມ່ຍິງ ແຂວງ ຄຳມ່ວນ | 051 251298 | ສາຍດ່ວນ 136 |
| 14. | ສະຫະພັນແມ່ຍິງ ແຂວງ ສະຫວັນນະເຂດ | 041 212016 | |
| 15. | ສະຫະພັນແມ່ຍິງ ແຂວງ ຈຳປາສັກ | 031 212022 | |
| 16. | ສະຫະພັນແມ່ຍິງ ແຂວງ ສາລະວັນ | 034 211118 | |
| 17. | ສະຫະພັນແມ່ຍິງ ແຂວງ ເຊກອງ | 038 211046 | |
| 18. | ສະຫະພັນແມ່ຍິງ ແຂວງ ອັດຕະປື | 036 211074 | |



ທ່ານຄວນປະຕິບັດຄຳແນະນຳໃນຄູ່ມືສະບັບນີ້ກັບເດັກທີ່ຢູ່
ໃນໂຮງຮຽນ ແລະ ຊຸມຊົນຂອງທ່ານ ພ້ອມທັງ
ໃນໂຮງຮຽນທີ່ທ່ານໃຫ້ການສະໜັບສະໜູນ.

Australian Aid

USAID
FROM THE AMERICAN PEOPLE

ສະໜັບສະໜູນໂດຍ ລັດຖະບານອົດສະຕຣາລີ ແລະ ອົງການ USAID